ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນ

ເລກທີ ๒๒ /ກຄສງ

ນະຄອນຫຼວງວຽງຈັນ, ວັນທີ ๒໒ກັນຍາ 2018

# ຄໍາແນະນໍາ
## ວ່າດ້ວຍການລາຍງານການເຄື່ອນໄຫວດໍາເນີນທຸລະກິດຂອງຜູ້ໃຫ້ບໍລິການໂອນເງິນ

- ອີງຕາມຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງສະຖາບັນການເງິນ ສະບັບເລກທີ 1041/ທຫລ, ລົງວັນທີ 25 ພະຈິກ 2016;
- ອີງຕາມຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງທຸລະກິດການໃຫ້ບໍລິການໂອນເງິນ ສະບັບເລກທີ 1058/ທຫລ, ລົງວັນທີ 05 ທັນວາ 2016.

ເພື່ອເປັນບ່ອນອີງພື້ນຖານໃຫ້ແກ່ການລາຍງານກ່ຽວກັບ ການເຄື່ອນໄຫວດໍາເນີນທຸລະກິດຂອງຜູ້ໃຫ້ບໍລິການໂອນເງິນທີ່ເປັນທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກ ແລະ ນິຕິບຸກຄົນອື່ນໆ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ແນ່ໃສ່ການຄຸ້ມຄອງ ແລະ ກວດກາ ວຽກງານການໃຫ້ບໍລິການໂອນເງິນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

## ຫົວໜ້າກົມຄຸ້ມຄອງສະຖາບັນການເງິນອອກຄໍາແນະນໍາ:

### 1. ການລາຍງານ, ການເກັບກໍາຂໍ້ມູນ ແລະ ຮູບແບບການລາຍງານການໂອນເງິນ

#### 1.1. ການລາຍງານການໂອນເງິນ

ການລາຍງານການໂອນເງິນແມ່ນການສັງລວມຈໍານວນ ແລະ ມູນຄ່າທຸລະກໍາການໂອນເງິນທີ່ເປັນສະກຸນເງິນຕາຕ່າງປະເທດ ແລະ ທຽບເທົ່າສະກຸນເງິນກີບ (LAK) ຂອງຜູ້ໃຫ້ບໍລິການໂອນເງິນແລ້ວລາຍງານການສັງລວມດັ່ງກ່າວ ມາຍັງທະນາຄານແຫ່ງ ສປປ ລາວ ເປັນປະຈໍາທຸກໆ ເດືອນ ໂດຍບໍ່ກາຍວັນທີ 5 ຂອງເດືອນຖັດໄປ.

#### 1.2. ການເກັບກໍາຂໍ້ມູນການໂອນເງິນ

ຜູ້ໃຫ້ບໍລິການໂອນເງິນຕ້ອງເກັບຂໍ້ມູນການເຄື່ອນໄຫວດໍາເນີນທຸລະກິດກ່ຽວກັບການໂອນເງິນເຂົ້າ-ອອກ ສປປ ລາວ ທີ່ຕົນໄດ້ໃຫ້ບໍລິການ ເຊັ່ນ: Western Union, Money Gram, Speed Send ແລະ ຜະລິດຕະພັນ ການໃຫ້ບໍລິການໂອນເງິນ ຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ ໂດຍປະກອບມີຂໍ້ມູນທີ່ຕ້ອງເກັບກໍາ ດັ່ງນີ້:



Scanned with CamScanner

1) ຊື່ປະເທດ;
2) ຈຳນວນທຸລະກຳການໂອນອອກ;
3) ຈຳນວນເງິນທີ່ໂອນອອກ:
   - ຈຳນວນເງິນທີ່ໂອນອອກ ສປປ ລາວ ເປັນສະກຸນເງິນຕາຕ່າງປະເທດ ແລະ ຕີມູນຄ່າທຽບເທົ່າສະກຸນເງິນກີບ (LAK) ຕາມອັດຕາແລກປ່ຽນໃນມື້ນັ້ນ;
   - ລວມລາຍຮັບຄ່າທຳນຽມການໂອນເງິນ ທີ່ເກັບຈາກລູກຄ້າເປັນສະກຸນເງິນຕາຕ່າງປະເທດ ແລະຕີມູນຄ່າທຽບເທົ່າສະກຸນເງິນກີບ (LAK) ຕາມອັດຕາແລກປ່ຽນໃນມື້ນັ້ນ;
   - ລວມຄ່າທຳນຽມການໂອນເງິນ ທີ່ຕ້ອງສົ່ງໃຫ້ຕົວແທນທີ່ເຮັດບໍລິການໂອນເງິນດ່ວນປາຍທາງ.
4) ຈຳນວນທຸລະກຳການໂອນເຂົ້າ;
5) ຈຳນວນເງິນທີ່ໂອນເຂົ້າ:
   - ຈຳນວນເງິນທີ່ໂອນເຂົ້າ ສປປ ລາວ ເປັນສະກຸນເງິນຕາຕ່າງປະເທດ ແລະ ຕີມູນຄ່າທຽບເທົ່າສະກຸນເງິນກີບ (LAK) ຕາມອັດຕາແລກປ່ຽນໃນມື້ນັ້ນ;
   - ລວມລາຍຮັບຄ່າທຳນຽມຈາກການໂອນເງິນເຂົ້າ ສປປ ລາວ ທີ່ໄດ້ຮັບຈາກຕົວແທນທີ່ເຮັດການບໍລິການໂອນເງິນດ່ວນຕົ້ນທາງເປັນສະກຸນເງິນຕາຕ່າງປະເທດ ແລະ ຕີມູນຄ່າທຽບເທົ່າສະກຸນເງິນກີບ (LAK) ຕາມອັດຕາແລກປ່ຽນໃນມື້ນັ້ນ.
6) ສະຫຼຸບສັງລວມຈຳນວນ ແລະ ມູນຄ່າຂອງທຸລະກຳທັງໝົດທີ່ໂອນອອກ-ໂອນເຂົ້າ.

**1.3. ຮູບແບບລາຍງານການໂອນເງິນ**

ການລາຍງານຕ້ອງປະຕິບັດຕາມແບບພິມລາຍງານທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນແຕ່ລະໄລຍະ ແລ້ວສົ່ງໃນຮູບແບບເປັນ ເອກະສານ ຫຼື ເອເລັກໂຕຣນິກ ຊຶ່ງໃນແບບພິມລາຍງານດັ່ງກ່າວ ຕ້ອງປະກອບມີຂໍ້ມູນຕິດຕໍ່ ແລະ ອ້າງອີງຂອງນິຕິບຸກຄົນທີ່ເປັນຜູ້ໃຫ້ບໍລິການໂອນເງິນ ໂດຍພື້ນຖານ ດັ່ງນີ້:

1) ຊື່ເປັນພາສາລາວ ແລະ ພາສາອັງກິດ ລວມທັງສັນຍາລັກ (Logo);
2) ຂໍ້ມູນໃນການຕິດຕໍ່ພົວພັນ ເຊັ່ນ: ໂທລະສັບ, ແຟັກ (Fax) ແລະ ທີ່ຢູ່ທາງເອເລັກໂຕຣນິກ (Email address);
3) ສະບັບເລກທີ ແລະ ລົງວັນທີ/ເດືອນ/ປີ ທີ່ລາຍງານ;
4) ເຊັນຢັ້ງຢືນຈາກຜູ້ອຳນວຍການ, ຫົວໜ້າພະແນກ ແລະ ຜູ້ສັງລວມທີ່ຮັບຜິດຊອບ;
5) ຂໍ້ມູນອື່ນໆ ທີ່ຈຳເປັນ ຫຼື ຕາມການແຈ້ງເພີ່ມເຕີມຂອງທະນາຄານແຫ່ງ ສປປ ລາວ.

## 2. ການຄຸ້ມຄອງ, ກວດກາ ແລະ ການປະຕິບັດພັນທະອື່ນໆ.

**2.1. ການຄຸ້ມຄອງ ແລະ ກວດກາ**

ຜູ້ໃຫ້ບໍລິການໂອນເງິນຕ້ອງປະຕິບັດຕາມລະບຽບກ່ຽວກັບການຄຸ້ມຄອງ ແລະ ການກວດກາທີ່ທະນາຄານແຫ່ງ ສປປ ລາວ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກວາງອອກ ໃນແຕ່ລະໄລຍະ.

**2.2. ການປະຕິບັດພັນທະ ຄ່າທຳນຽມຂອງຜູ້ໃຫ້ບໍລິການໂອນເງິນ**

ຜູ້ໃຫ້ບໍລິການໂອນເງິນຕ້ອງເສຍຄ່າທຳນຽມປະຈຳປີຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ຂອງຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງທຸລະກິດການໃຫ້ບໍລິການໂອນເງິນ ສະບັບເລກທີ1058/ທຫລ, ລົງວັນທີ 05 ທັນວາ2016.



Scanned with CamScanner

ຜູ້ໃຫ້ບໍລິການໂອນເງິນທີ່ເປັນທະນາຄານທຸລະກິດ ຫຼື ສະຖາບັນການເງິນແມ່ນເສຍຄ່າທຳນຽມລວມຢູ່ໃນຄ່າທຳນຽມປະຈຳປີ ຂອງຕົນ.

**2.3. ການຝາກເງິນແຮ**

ຜູ້ໃຫ້ບໍລິການໂອນເງິນ ນອກຈາກຕ້ອງມີຖານະການເງິນທີ່ໝັ້ນຄົງແລ້ວ ຍັງຕ້ອງມີບັນຊີເງິນຝາກແຮກັບທະນາຄານທຸລະກິດໃດໜຶ່ງ ຕາມທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ ເພື່ອຮັບປະກັນການມີສະພາບຄ່ອງໃນການໃຫ້ບໍລິການແກ່ລູກຄ້າຂອງຕົນ.

**2.4. ການປະຕິບັດພັນທະດ້ານລະບຽບການພາຍໃນ**

ຜູ້ໃຫ້ບໍລິການໂອນເງິນ ຕ້ອງປະຕິບັດພັນທະຂອງຕົນ ຕາມທີ່ກຳນົດໄວ້ໃນ ມາດຕາ 32 ຂອງກົດໝາຍວ່າດ້ວຍ ລະບົບຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 7 ພະຈິກ 2017 ດັ່ງນີ້:

1) ສ້າງລະບຽບການກ່ຽວກັບການດຳເນີນງານ ແລະ ການບໍລິການ ຂອງຕົນ;
2) ປະຕິບັດລະບອບການລາຍງານ ແລະ ສະໜອງຂໍ້ມູນໃຫ້ແກ່ທະນາຄານແຫ່ງ ສປປ ລາວ;
3) ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳ ແລະ ຂໍ້ຕົກລົງທີ່ກ່ຽວຂ້ອງ.

**2.5. ການເຂົ້າເປັນສະມາຊິກຂອງລະບົບການໂອນເງິນແບບທັນທີ**

ຜູ້ໃຫ້ບໍລິການໂອນເງິນ ຕ້ອງເຂົ້າເປັນສະມາຊິກຂອງລະບົບການໂອນເງິນແບບທັນທີ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງ ສະບັບເລກທີ 531/ທຫລ, ລົງວັນທີ 04 ກໍລະກົດ 2016 ແລະ ນິຕິກຳທີ່ກ່ຽວຂ້ອງ.

ຜູ້ໃຫ້ບໍລິການໂອນເງິນທີ່ເປັນນິຕິບຸກຄົນທີ່ບໍ່ແມ່ນທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ຊຶ່ງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ແມ່ນໃຫ້ເປັນສະມາຊິກຂອງລະບົບການໂອນເງິນແບບທັນທີ ຜ່ານທະນາຄານທຸລະກິດ (Association Member) ທີ່ມີເງື່ອນໄຂເໝາະສົມ.

**2.6. ການຮັກສາຄວາມລັບຂອງການລາຍງານ**

ການລາຍງານຕາມທີ່ໄດ້ກຳນົດໄວ້ໃນ ຄຳແນະນຳສະບັບນີ້ ຜູ້ໃຫ້ບໍລິການໂອນເງິນຕ້ອງເກັບຮັກສາເປັນຄວາມລັບ ແລະ ບໍ່ເປີດເຜີຍໃຫ້ແກ່ພາກສ່ວນທີ່ບໍ່ກ່ຽວຂ້ອງ ເວັ້ນເສຍແຕ່ກໍລະນີໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

**3. ການຄຸ້ມຄອງ, ກວດກາ ແລະ ການປະຕິບັດພັນທະວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງຜູ້ໃຫ້ບໍລິການໂອນເງິນ**

**3.1. ການຄຸ້ມຄອງ ແລະ ການກວດກາວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງຜູ້ໃຫ້ບໍລິການໂອນເງິນ**

ສຳນັກງານຂໍ້ມູນຕ້ານການຟອກເງິນເປັນຜູ້ຄຸ້ມຄອງ ແລະ ກວດກາການຈັດຕັ້ງປະຕິບັດພັນທະຂອງຜູ້ໃຫ້ບໍລິການໂອນເງິນ ໃນຂອບເຂດທົ່ວປະເທດ ເປັນແຕ່ລະໄລຍະ.

**3.2.ການປະຕິບັດພັນທະວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

3.2.1. ຜູ້ໃຫ້ບໍລິການໂອນເງິນຕ້ອງປະຕິບັດພັນທະຂອງຕົນດ້ານວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014 ດັ່ງນີ້:



Scanned with CamScanner

1) ການສ້າງແຜນຕາມ ມາດຕາ 19 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2) ການຊອກຮູ້ລູກຄ້າ ແລະ ການເພີ່ມທະວີການເອົາໃຈໃສ່ລູກຄ້າ ຕາມຂໍ້ຕົກລົງ ສະບັບເລກທີ 01/ ຄຕຟງ, ລົງວັນທີ 15 ມັງກອນ 2016;

3) ການລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມຂໍ້ຕົກລົງ ສະບັບເລກທີ13/ຄຕຟງ, ລົງວັນທີ 19 ຕຸລາ 2015;

4) ການລາຍງານທຸລະກຳເງິນສົດທີ່ມີມູນຄ່າເກີນກຳນົດ ຕາມຂໍ້ຕົກລົງ ສະບັບເລກທີ 417/ທຫລ, ລົງວັນທີ 05 ມິຖຸນາ 2015;

5) ການບັນທຶກຂໍ້ມູນທຸລະກຳໂອນເງິນ ຕາມຂໍ້ຕົກລົງ ສະບັບເລກທີ 963/ທຫລ, ລົງວັນທີ 27 ພະຈິກ 2015;

6) ພັນທະດ້ານອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳທີ່ກ່ຽວຂ້ອງ.

3.2.2.ການລາຍງານທຸລະກຳທີ່ສົງໄສ ຕາມຂໍ້ 4 ຍ່ອຍຂອງຂໍ້3 ຂ້າງເທິງນີ້ຜູ້ໃຫ້ບໍລິການໂອນເງິນຕ້ອງເກັບຮັກສາເປັນຄວາມລັບ, ຫ້າມເປີດເຜີຍໃຫ້ແກ່ລູກຄ້າຂອງຕົນຊາບ ບໍ່ວ່າຈະກໍລະນີໃດກໍ່ຕາມ ລວມທັງຫ້າມເປີດເຜີຍຂໍ້ມູນ ຫຼື ມີພຶດຕິກຳ ຫຼື ການກະທຳໃດໜຶ່ງ ຫຼື ດ້ວຍວິທີການໃດກໍ່ຕາມທີ່ຈະເຮັດໃຫ້ລູກຄ້າຂອງຕົນຊາບວ່ານຳໃຊ້ມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ທີ 3 ຂອງຄຳແນະນຳສະບັບນີ້.

## 4. ການຈັດຕັ້ງປະຕິບັດ ແລະ ຜົນສັກສິດ

ຜູ້ໃຫ້ບໍລິການໂອນເງິນ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຕ້ອງປະຕິບັດຕາມຄຳແນະນຳສະບັບນີ້ຢ່າງເຂັ້ມງວດ.

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ທີ່ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າກົມ

ອາລຸນ ບຸນຍົງ



Scanned with CamScanner